ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

********************************

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມສົ່ງເສີມ ແລະ ພັດທະນາສິນຄ້າ

1266

ເລກທີ 1266 /ສພຄ

ນະຄອນຫຼວງວຽງຈັນ, ວັນທີ 08 SEP 2011

ເຖິງ : ທ່ານ ຫົວໜ້າບໍລິສັດ/ໂຮງງານ......................................................

ເລື່ອງ : ແຈ້ງການເປີດໃຫ້ບໍລິການຫ້ອງສະໝຸດທຸລະກິດ ແລະ ວາງສະແດງສິນຄ້າຕົວຢ່າງ ຢູ່ກົມສົ່ງເສີມ ແລະ ພັດທະນາສິນຄ້າ.

- ອີງຕາມພາລະບົດບາດຂອງກົມສົ່ງເສີມ ແລະ ພັດທະນາສິນຄ້າ ໃນການຊຸກຍູ້ສົ່ງເສີມ ບັນດາຫົວໜ່ວຍທຸລະກິດລາວ ໃຫ້ມີຄວາມເຂັ້ມແຂງສາມາດແຂ່ງຂັນກັບຕະຫລາດສາກົນ.

ກົມສົ່ງເສີມ ແລະ ພັດທະນາສິນຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ປະຈຸບັນນີ້ ທາງ ກົມສົ່ງເສີມ ໄດ້ເປີດໃຫ້ບໍລິການຫ້ອງສະໝຸດທຸລະກິດ ໃນນັ້ນເຮົາມີການວາງສະແດງສິນຄ້າຕົວຢ່າງ ຂອງບັນດາບໍລິສັດຕ່າງໆ ຢູ່ໃນຫ້ອງສະໝຸດ, ຈຸດປະສົງເພື່ອຊຸກຍູ້ສົ່ງເສີມທາງດ້ານການຕະຫລາດ ຊ່ວຍໃຫ້ຫົວໜ່ວຍທຸລະກິດສາມາດເຂົ້າຫາຕະຫລາດ ແລະ ສາມາດສົ່ງອອກສິນຄ້າເພີ້ມຂຶ້ນ.

ສະນັ້ນ, ຈຶ່ງຂໍຄວາມຮ່ວມມືກັບບັນດາບໍລິສັດ/ໂຮງງານ ເພື່ອນຳເອົາສິນຄ້າຂອງທ່ານມາລົງ ໂຄສະນາຢູ່ກົມສົ່ງເສີມ ແລະ ພັດທະນາສິນຄ້າ ໂດຍບໍ່ໄດ້ເສຍຄ່າໃຊ້ຈ່າຍໃດໆ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານເພື່ອຊາບ ແລະ ຂໍເຊີນຊວນທຸກໆທ່ານເຂົ້າມານຳໃຊ້ຫ້ອງສະ ໝຸດ ແລະ ຫ້ອງວາງສະແດງສິນຄ້າຕົວຢ່າງຂອງກົມ ເພື່ອໃຫ້ເປັນປະໂຫຍດຕໍ່ທຸລະກິດຂອງທ່ານ.

ຮັກສາການຫົວໜ້າກົມສົ່ງເສີມ ແລະ ພັດທະນາສິນຄ້າ

ກະຊວງອຸດສາຫະກຳ ແລະ ການຄ້າ — ກົມສົ່ງເສີມ ແລະ ພັດທະນາສິນຄ້າ

ສົມຫວັງ ນິນທະວົງ

ໝາຍເຫດ : ສົນໃຈຕິດຕໍ່ສອບຖາມ

ນ. ບົວທອງ ດາວສີສະຫ້ອນ 020.22202350

ນ. ແສງແກ້ວ ເດດລາວົງ 020 55575546